**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 025 /ສພທ.ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 05/04/2021

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄຫມສາມັນ
## ວັນທີ 05/04/2021

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 2 ປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ວັນທີ 05/04/2021 ທີ່ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມ ຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມໄດ້ປຶກສາຫາລື ແລະ ມີມະຕິຕົກລົງບາງບັນຫາສຳຄັນ ດັ່ງນີ້:**

1. ຮັບຮອງການປ່ອຍກູ້ ໃຫ້ລູກຄ້າທຸລະກິດ 1 ລາຍການ;
2. ຮັບຮອງລະບຽບຜະລິດຕະພັນສິນເຊື່ອເພື່ອສົ່ງເສີມທຸລະກິດໄຟຟ້າ;
3. ຮັບຮອງຜົນກວດສອບລາຍງານການເງິນຂອງ ທຄຕລ ປະຈຳປີ 2020 (ມາດຖານລາວ) ແລະ ພິຈາລະນາຮັບຮອງເງິນປັນຜົນຮຸ້ນ ທຄຕລປະຈຳປີ 2020 ຈຳນວນ 560 ກີບ/ຮຸ້ນ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
4. ຮັບຮອງແຜນຍຸດທະສາດ ທຄຕລ 2021-2025 ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
5. ຮັບຮອງໜັງສືແຈ້ງເຊີນ, ວາລະ ແລະ ເອກະສານຂອງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020;
6. ຮັບຮອງລາຍຊື່ສະມາຊິກສະພາບໍລິຫານ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
7. ຮັບຮອງການແຕ່ງຕັ້ງບຸກຄະລາກອນຂັ້ນພະແນກຈຳນວນໜຶ່ງ;

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບຸນເຫຼືອ ສິນໄຊວໍຣະວົງ